ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
***********000************

ອົງການໄອຍະການປະຊາຊົນສູງສຸດ

ເລກທີ 018..../ອອປສ
ນະຄອນຫຼວງວຽງຈັນ, ວັນທີ.25./.11../2013

# ຄຳແນະນຳ
# ຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ

ເຖິງ : ຫົວໜ້າອົງການໄອຍະການປະຊາຊົນພາກ, ແຂວງ, ນະຄອນ, ເຂດ ແລະ ອົງການໄອຍະການທະຫານໃນຂອບເຂດທົ່ວປະເທດ.
ເລື່ອງ: ແນະນຳການຈັດຕັ້ງປະຕິບັດມາດຕາ 34, ມາດຕາ 36 ຂອງກົດໝາຍວ່າດ້ວຍຢາເສບຕິດ

- ອີງຕາມ ກົດໝາຍອາຍາສະບັບປັບປຸງປີ 2005
- ອີງຕາມ ກົດໝາຍວ່າດ້ວຍຢາເສບຕິດສະບັບ ປີ 2007
- ອີງຕາມ ມາດຕາ 10,13,27 ຂອງກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ສະບັບປັບປຸງ ປີ 2009.
- ອີງຕາມ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາສະບັບປັບປຸງປີ 2012
- ອີງຕາມ ກົດໝາຍວ່າດ້ວຍການປັບປຸງມາດຕາ 146 ຂອງກົດໝາຍອາຍາ ແລະ ມາດຕາ 75 ຂອງກົດໝາຍວ່າດ້ວຍຢາເສບຕິດ ສະບັບປັບປຸງເລກທີ 22/ສພຊ ລົງວັນທີ 11/ 12/ 2012

ເພື່ອປະຕິບັດສິດ ແລະ ໜ້າທີ່ຂອງອົງການໄອຍະການປະຊາຊົນ ໃນການຕິດຕາມກວດກາການປະຕິບັດກົດໝາຍໃຫ້ຖືກຕ້ອງ ແລະ ເປັນເອກະພາບໃນການຈັດຕັ້ງປະຕິບັດຕາມມາດຕາ 34 ວັກ 4 ແລະ ມາດຕາ 36 ວັກ 4 ຂອງກົດໝາຍວ່າດ້ວຍຢາເສບຕິດ ໃຫ້ເປັນໄປຢ່າງຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ.

ຫົວໜ້າອົງການໄອຍະການປະຊາຊົນສູງສຸດຈຶ່ງອອກຄຳແນະນຳດັ່ງນີ້:

1. ກົດໝາຍວ່າດ້ວຍຢາເສບຕິດ

1.1. ມາດຕາ 34 ວັກ 4 ກ່ຽວກັບຂອງກາງ

ໃນກໍລະນີທີ່ມີການຮັບສາລະພາບຂອງຜູ້ຖືກຫາແຕ່ບໍ່ມີຂອງກາງນັ້ນຕ້ອງໄດ້ຊອກຫາພະຍານ, ຫລັກຖານອື່ນໃນຄະດີມາຢັ້ງຢືນເພື່ອຕັດສິນ.

ໃນຄຳວ່າ: ຕ້ອງໄດ້ຊອກຫາພະຍານ, ຫລັກຖານອື່ນໃນຄະດີມາຢັ້ງຢືນເພື່ອຕັດສິນໃນກໍລະນີທີ່ບໍ່ມີຂອງກາງ ( ຢາເສບຕິດ ) ນັ້ນຕ້ອງຊອກຫາຫຼັກຖານອື່ນເຊັ່ນວ່າ:

- **ຫລັກຖານທາງດ້ານວັດຖຸ:** ຕ້ອງແມ່ນໄດ້ມາຈາກວັດຖຸສິ່ງຂອງທີ່ພົວພັນກັບການກະທຳຜິດເຊັ່ນ: ຍານພາຫະນະທີ່ມີການດັດແປງໃນການຊຸກເຊື່ອງຢາເສບຕິດ, ເຄື່ອງຈັກສຳລັບອັດເມັດ, ແທ່ງ, ມັດ, ຖົງ, ຢາເສບຕິດ ແລະ ທາດຕ່າງໆທີ່ນຳໄປປະສົມກັບທາດຢາເສບຕິດ, ຖົງ ຫຼື ຫີບຫຸ້ມຫໍ່ທີ່ມີຄາບຢາເສບຕິດຕິດຢູ່, ເງິນ ແລະ ວັດຖຸມີຄ່າທີ່ກ່ຽວພັນໃນການຊື້ຂາຍຢາເສບຕິດໂດຍຈະຕ້ອງໄດ້ຜ່ານການກວດກາພິສູດຊັ່ງຊາຕີລາຄາ ກ່ຽວກັບທີ່ມາຂອງເງິນ ແລະ ວັດຖຸທີ່ມີຄ່າຢ່າງຈະແຈ້ງ.
- **ຫລັກຖານທາງດ້ານເອກະສານ:** ແມ່ນໄດ້ມາຈາກຈົດໝາຍທີ່ມີການພົວພັນເຖິງບັນຫາຢາເສບຕິດ , ບົດບັນທຶກການສືບສວນ-ສອບສວນ, ປຶ້ມບັນທຶກ, ບັນຊີເງິນຝາກ, ເບີໂທລະສັບຕິດຕໍ່, ແຜນວາດເສັ້ນທາງການຈໍລະຈອນຢາເສບຕິດຂອງຜູ້ກະທຳຜິດ, ຮູບພາບ ແລະ ເອກະສານອື່ນໆທີ່ກ່ຽວພັນກັບການກະທຳຜິດ.
- **ຫລັກຖານທາງດ້ານບຸກຄົນ:** ແມ່ນໄດ້ມາຈາກຄຳໃຫ້ການຂອງຜູ້ຖືກສົງໄສ, ຜູ້ຖືກຫາ ຫລື ຈຳເລີຍ, ຂອງພະຍານ, ຜູ້ຖືກເສຍຫາຍ, ໂຈດທາງແພ່ງ ຫຼື ຜູ້ຮັບຜິດຊອບທາງແພ່ງ, ການຊີ້ຕົວ, ການຢັ້ງຢືນ, ຄຳເຫັນຂອງຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ ທີ່ພົວພັນກັບການກະທຳຜິດ.

ບັນດາຂໍ້ມູນຫຼັກຖານທັງໝົດຈະຕ້ອງໄດ້ຜ່ານຂັ້ນຕອນ, ຂະບວນການກວດກາພິສູດຢ່າງ ຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ ຊຶ່ງມັນສະແດງອອກດັ່ງນີ້:

❖ ຮອບດ້ານ: ໝາຍເຖິງການດຳເນີນຄະດີຕ້ອງຊອກຫາຫຼັກຖານທັງຜູກມັດ ແລະ ແກ້ມັດ ໂດຍຕ້ອງໄດ້ຄົ້ນຄວ້າຫຼັກຖານທີ່ຢັ້ງຢືນການກະທຳຜິດ ແລະ ຢັ້ງຢືນຄວາມບໍລິສຸດຂອງຜູ້ຖືກຫາ, ຖ້າມີການກະທຳຜິດແລ້ວຕ້ອງໄດ້ຊອກຫາວ່າມີສາເຫດທີ່ພາໃຫ້ເພີ່ມ ຫຼື ຫຼຸດຜ່ອນຄວາມຮັບຜິດຊອບທາງອາຍາຂອງຜູ້ຖືກຫາ. ຖ້າມີຫຼັກຖານຢັ້ງຢືນຄວາມບໍລິສຸດຂອງຜູ້ຖືກຫາແລ້ວ ຖືວ່າຜູ້ກ່ຽວບໍ່ມີຄວາມຮັບຜິດຊອບທາງອາຍາ.

❖ ຄົບຖ້ວນ: ໝາຍຄວາມວ່າຂໍ້ມູນຫຼັກຖານຕ່າງໆ ທີ່ເກັບກຳມາໄດ້ນັ້ນຄົບຖ້ວນ, ໜັກແໜ້ນ ແລະ ມີຄົບ 4 ອົງປະກອບຂອງການກະທຳຜິດທາງອາຍາ. ຫຼັກຖານທີ່ໄດ້ມານັ້ນຕ້ອງໄດ້ຄົ້ນຄວ້າວິໄຈຢ່າງຮອບດ້ານ ແລະ ພາວະວິໄສໃນແຕ່ລະຫຼັກຖານ ແລ້ວຈຶ່ງມາສະຫຼຸບ ຊັ່ງຊາ ຕີລາຄາ ໂດຍບໍ່ໃຫ້ຖືເອົາພຽງແຕ່ຂໍ້ມູນໃດຂໍ້ມູນໜຶ່ງມາຄົ້ນຄວ້າແລ້ວຕີລາຄາວ່າ ຜູ້ຖືກຫາເປັນຜູ້ກະທຳຜິດໂລດ.

❖ ພາວະວິໄສ: ໝາຍຄວາມວ່າໃນການຄົ້ນຄວ້າຊັ່ງຊາຕີລາຫຼັກຖານນັ້ນ ຕ້ອງຖືເອົາກົດໝາຍເປັນພື້ນຖານໃນການປະຕິບັດ, ການດຳເນີນຄະດີຕ້ອງຢູ່ບົນພື້ນຖານກົດໝາຍ ແລະ ຄວາມຍຸຕິທຳ ຂໍ້ມູນຫຼັກຖານຕ້ອງໄດ້ມາຈາກເຫດການຕົວຈິງ ແລະ ບໍ່ສ້າງຂຶ້ນມາເອງ ຫຼີກເວັ້ນບັນຫາທາງດ້ານອາລົມຈິດນິຍົມ, ດ້ານ

ອັດຕະວິໄສ, ໃຫ້ ຫຼື ຮັບສິນບົນ ແລະ ບັນຫາອື່ນໆ ເພາະຈະພາໃຫ້ການຕີລາຄາຫຼັກຖານທີ່ເກັບກຳມາໄດ້ນັ້ນບໍ່ຊັດເຈນ ແລະ ມີການປຸ່ງແປງ ສຸດທ້າຍກໍຈະເຮັດໃຫ້ຜູ້ກະທຳຜິດນັ້ນບໍ່ໄດ້ຮັບການລົງໂທດ ແລະ ຜູ້ບໍ່ໄດ້ກະທຳຜິດນັ້ນໄດ້ຮັບການລົງໂທດ.

1.2. ມາດຕາ 36 ວັກ 4 ການຊັດທອດ.

ການຊັດທອດໃສ່ບຸກຄົນໃດໜຶ່ງໂດຍບໍ່ມີຂອງກາງແຕ່ມີຫລັກຖານຮັດກຸມ ແລະ ບຸກຄົນນີ້ປະຕິເສດບໍ່ຮັບຮູ້ກໍໃຫ້ດຳເນີນຄະດີຕາມກົດໝາຍ ແຕ່ຕ້ອງອີງໃສ່ບັນດາຫຼັກຖານທາງດ້ານວັດຖຸ, ຫຼັກຖານທາງດ້ານເອກະສານ, ຫຼັກຖານທາງດ້ານບຸກຄົນ ແລະ ຜ່ານຂັ້ນຕອນຕາມທີ່ໄດ້ກ່າວມາໃນຂໍ້ 1 ຂ້າງເທິງນັ້ນ.

1.3 ການຮັບສາລະພາບ ຫຼື ການຊັດທອດໂດຍມີຫຼັກຖານໜັກແໜ້ນຮັດກຸມຕາມທີ່ໄດ້ກຳນົດໄວ້ໃນມາດຕາ 34 ວັກທີ 4 ແລະ ມາດຕາ 36 ວັກທີ 4 ຂອງກົດໝາຍວ່າດ້ວຍຢາເສບຕິດ ອີງຕາມມາດຕາ 3 ການປັບປຸງມາດຕາ 75 ຂອງກົດໝາຍວ່າດ້ວຍຢາເສບຕິດ ( ຕາມກົດໝາຍວ່າດ້ວຍການປັບປຸງມາດຕາ 146 ຂອງກົດໝາຍອາຍາ ແລະ ມາດຕາ 75 ຂອງກົດໝາຍວ່າດ້ວຍຢາເສບຕິດ ສະບັບເລກທີ 22/ສພຊ ລົງວັນທີ 11/12/2013 ) ໄດ້ກຳນົດວ່າ ຜູ້ຮັບສາລະພາບ ຫຼື ຜູ້ຖືກຊັດທອດຈະຖືກລົງໂທດຕ່ຳສຸດຕາມປະເພດຢາເສບຕິດທີ່ໄດ້ກຳນົດໄວ້ໃນມາດຕາ 146 ຂອງກົດໝາຍອາຍາ ແລະ ຈະຖືກຮິບຊັບຕາມທີ່ໄດ້ກຳນົດໄວ້ໃນມາດຕາ 34 ຂອງກົດໝາຍອາຍາ.

<<ຄຳວ່າຈະຖືກລົງໂທດຕ່ຳສຸດຕາມປະເພດຢາເສບຕິດ>> ໝາຍຄວາມວ່າການສັ່ງຟ້ອງຂອງຫົວໜ້າອົງການໄອຍະການປະຊາຊົນກໍຕ້ອງທຳການສັ່ງຟ້ອງຜູ້ຖືກຫາຂຶ້ນສານໃສ່ວັກຕ່ຳສຸດຂອງປະເພດຢາເສບຕິດ.

❖ ຕົວຢ່າງ 1: ການຮັບສາລະພາບຂອງຜູ້ຖືກຫາແຕ່ບໍ່ມີຢາເສບຕິດທີ່ເປັນຂອງກາງ

ທ້າວ ກ ຮັບສາລະພາບວ່າຜ່ານມາເຄີຍໄດ້ຄ້າຂາຍຢາເສບຕິດ ( ຢາບ້າ ) ມາແລ້ວໜຶ່ງຄັ້ງ ຫຼື ຫຼາຍຄັ້ງໂດຍມີຈຳນວນຢາບ້າແຕ່ໜຶ່ງເມັດຫາຫຼາຍເມັດ ແຕ່ບໍ່ມີຂອງກາງຄະດີ ກໍລະນີດັ່ງກ່າວຖ້າຫາກມີພະຍານຫຼັກຖານຕາມທີ່ໄດ້ກຳນົດໄວ້ ໃນຂໍ້ 1.1 ຂອງຄຳແນະນຳສະບັບນີ້ ຫົວໜ້າອົງການໄອຍະການຕ້ອງສັ່ງຟ້ອງ ທ້າວ ກ ຂຶ້ນສານໃສ່ວັກຕ່ຳສຸດຂອງປະເພດຢາເສບຕິດ ( ຢາບ້າ ).

ໃນກໍລະນີ ການຮັບສາລະພາບທີ່ບໍ່ມີຂອງກາງ ແລະ ບໍ່ມີຂໍ້ມູນຫຼັກຖານໜັກແໜ້ນ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1.1 ຂອງຄຳແນະນຳສະບັບນີ້ ຫົວໜ້າອົງການໄອຍະການກໍຈະບໍ່ສາມາດທຳການສັ່ງຟ້ອງຜູ້ກ່ຽວໄດ້.

❖ ຕົວຢ່າງ 2: ການຊັດທອດໃສ່ບຸກຄົນໃດໜຶ່ງໂດຍບໍ່ມີຢາເສບຕິດທີ່ເປັນຂອງກາງ

ທ້າວ ກ ຖືກດຳເນີນຄະດີໃນສະຖານຄ້າຂາຍຢາເສບຕິດ ( ເຮໂຣອິນ ) ແຕ່ບໍ່ມີຂອງກາງຄະດີຜູ້ກ່ຽວຮັບສາລະພາບວ່າຜ່ານມາເຄີຍໄດ້ຊື້ເຮໂຣອິນຈຳນວນ 100 ກຣາມ ນຳທ້າວ ຂ ແລ້ວເຈົ້າໜ້າທີ່ໄດ້ດຳເນີນຄະດີຕໍ່ ທ້າວ ຂ, ແຕ່ທ້າວ ຂ ໄດ້ໃຫ້ການປະຕິເສດ ກໍລະນີດັ່ງກ່າວນີ້ຖ້າຫາກມີຫຼັກຖານຄົບຖ້ວນ, ຮັດກຸມຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1.1 ຂອງຄຳແນະນຳສະບັບນີ້ ກໍໃຫ້ຫົວໜ້າອົງການໄອຍະການທຳການສັ່ງຟ້ອງທ້າວ ກ ແລະ ທ້າວ ຂ ຂຶ້ນສານໃສ່ວັກຕ່ຳສຸດຂອງປະເພດຢາເສບຕິດ ( ເຮໂຣອິນ ).

❖ ຕົວຢ່າງ 3: ໃນກໍລະນີ ທ້າວ ກ ຖືກດໍາເນີນຄະດີໃນສະຖານຄ້າຂາຍຢາເສບຕິດມີຂອງກາງ ( ຢາບ້າ ) 100 ກຣາມ ແຕ່ຜູ້ກ່ຽວໃຫ້ການຊັດທອດວ່າໄດ້ຊື້ຢາບ້າດັ່ງກ່າວມາຈາກ ທ້າວ ຂ ເຈົ້າໜ້າທີ່ໄດ້ດໍາເນີນຄະດີຕໍ່ທ້າວ ຂ ແຕ່ທ້າວ ຂ ໄດ້ໃຫ້ການປະຕິເສດ ກໍລະນີດັ່ງກ່າວ ຖ້າມີຫຼັກຖານໜັກແໜ້ນ, ຮັດກຸມຕາມທີ່ໄດ້ກໍານົດໄວ້ໃນຂໍ້ 1.1 ຂອງຄໍາແນະນໍາສະບັບນີ້ ກໍໃຫ້ຫົວໜ້າອົງການໄອຍະການທໍາການສັ່ງຟ້ອງໃສ່ ທ້າວ ກ ແລະ ທ້າວ ຂ ໃນສະຖານດຽວ ແລະ ຕາມອັກຕາດຽວກັນຂອງປະເພດຢາເສບຕິດ (ຢາບ້າ) ທີ່ກົດໝາຍວ່າດ້ວຍການປັບປຸງ ມາດຕາ 146 ຂອງກົດໝາຍອາຍາກໍານົດໄວ້.

ໃນກໍລະນີທ້າວ ຂ ໃຫ້ການປະຕິເສດ ຖ້າບໍ່ມີຂໍ້ມູນຫຼັກຖານໜັກແໜ້ນ ຕາມທີ່ໄດ້ກໍານົດໄວ້ໃນ ຂໍ້ 1.1 ຂອງຄໍາແນະນໍາສະບັບນີ້ແລ້ວ ກໍຖືວ່າບໍ່ຕ້ອງທໍາການສັ່ງຟ້ອງຕໍ່ທ້າວ ຂ ແຕ່ຢ່າງໃດ.

1.4. ສໍາລັບມາດຕາ 146 ຂອງກົດໝາຍອາຍາ ແລະ ມາດຕາ 75 ຂອງກົດໝາຍວ່າດ້ວຍຢາເສບຕິດ ສະບັບປັບປຸງເລກທີ 22/ສພຊ, ລົງວັນທີ 11/ 12/ 2012 ນັ້ນ ແມ່ນໄດ້ສົ່ງໃຫ້ບັນດາອົງການໄອຍະການໃນຂອບເຂດທົ່ວປະເທດແລ້ວ.

ດັ່ງນັ້ນ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຈຶ່ງໄດ້ເຮັດຄໍາແນະນໍາໃຫ້ ອົງການໄອຍະການ ໃນຂອບເຂດທົ່ວປະເທດຈັດຕັ້ງປະຕິບັດຢ່າງເຂັ້ມງວດ, ຜ່ານການຈັດຕັ້ງປະຕິບັດໄດ້ຮັບຜົນແນວໃດໃຫ້ລາຍງານຫົວໜ້າອົງການໄອຍະການປະຊາຊົນສູງສຸດ ເພື່ອຈະໄດ້ມີທິດຊີ້ນໍາໃນການຈັດຕັ້ງປະຕິບັດຕໍ່ໄປ.

ຫົວໜ້າອົງການໄອຍະການປະຊາຊົນສູງສຸດ

ອົງການໄອຍະການປະຊາຊົນສູງສຸດ

ຄໍາສານ ສຸວົງ